**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ 11 /ລບ
ນະຄອນຫຼວງວຽງຈັນ, ວັນທີ 05/02/26

# ດຳລັດ
# ວ່າດ້ວຍການຄຸ້ມຄອງບໍລິເວນຊາຍແດນ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍຊາຍແດນແຫ່ງຊາດ ສະບັບເລກທີ 10/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ໜັງສືສະເໜີຂອງກະຊວງການຕ່າງປະເທດ ສະບັບເລກທີ 8182/ຕປທ.ສຍກ, ລົງວັນທີ 10 ທັນວາ 2025.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ຕິດຕາມ ກວດກາ ວຽກງານຄຸ້ມຄອງ ບໍລິເວນຊາຍແດນ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີ ຄວາມເປັນເອກະພາບ, ປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຮັບປະກັນ ຄວາມໝັ້ນຄົງ, ຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນຊາຍແດນ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ການຄຸ້ມຄອງບໍລິເວນຊາຍແດນ**

ການຄຸ້ມຄອງບໍລິເວນຊາຍແດນ ແມ່ນ ການ ຄວບຄຸມ, ຕິດຕາມ ກວດກາ ການເຄື່ອນໄຫວຢູ່ບໍລິເວນຊາຍແດນ ເປັນຕົ້ນ ການ ຢູ່ອາໄສ ແລະ ປະຕິບັດໜ້າທີ່, ການເຂົ້າ-ອອກ, ເດີນທາງຜ່ານ, ການເຄື່ອນໄຫວຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ, ການນຳໃຊ້ຍານພາຫະນະ, ດຳເນີນ ໂຄງການພັດທະນາ ແລະ ກິດຈະການ.

**ມາດຕາ 3 ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ເຄື່ອນໄຫວ ແລະ ພົວພັນ ກັບວຽກງານຄຸ້ມຄອງບໍລິເວນຊາຍແດນ ຂອງ ສປປ ລາວ.

## ໝວດທີ 2
## ບໍລິເວນຊາຍແດນ

**ມາດຕາ 4 ບໍລິເວນຊາຍແດນ**

ບໍລິເວນຊາຍແດນ ແມ່ນ ບ້ານ ທີ່ມີເຂດແດນສ່ວນໜຶ່ງ ຕິດກັບຊາຍແດນແຫ່ງຊາດ ລວມທັງ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດອື່ນ ຢູ່ບໍລິເວນຊາຍແດນ. ການກຳນົດເຂດແດນ ຂອງບໍລິເວນຊາຍແດນ ໃຫ້ນັບແຕ່ຊາຍແດນແຫ່ງຊາດ ເຂົ້າມາຈົນສຸດເຂດບ້ານ ທີ່ມີເຂດແດນສ່ວນໜຶ່ງ ຕິດກັບຊາຍແດນແຫ່ງຊາດ.

ໃນບໍລິເວນຊາຍແດນ ມີການກຳນົດ ຂອບເຂດຊາຍແດນ ແລະ ເຂດຫວງຫ້າມ ຊຶ່ງມີປ້າຍບົ່ງບອກສະເພາະ.

ບ້ານ ທີ່ກຳນົດເປັນບ້ານບໍລິເວນຊາຍແດນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 5 ຂອບເຂດຊາຍແດນ**

ຂອບເຂດຊາຍແດນ ແມ່ນ ດິນແດນສ່ວນໜຶ່ງ ນັບແຕ່ເສັ້ນຊາຍແດນແຫ່ງຊາດ ເລິກເຂົ້າມາດິນແດນຂອງ ສປປ ລາວ ບ່ອນແຄບສຸດແມ່ນ 100 ແມັດ, ບ່ອນກວ້າງສຸດບໍ່ເກີນ 1.000 ແມັດ ແລະ ມີປ້າຍບົ່ງບອກ "ຂອບເຂດຊາຍແດນ".

ການກຳນົດຄວາມກວ້າງ ຂອບເຂດຊາຍແດນ ຕ້ອງອີງໃສ່ຄວາມເໝາະສົມຂອງພື້ນທີ່ພູມມີປະເທດ, ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ. ສຳລັບເຂດ ທີ່ມີ ດ່ານຊາຍແດນ, ຕະຫຼາດຊາຍແດນ, ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດອື່ນ ຕ້ອງອີງໃສ່ຄວາມຈຳເປັນ ໃນການພັດທະນາ ເສດຖະກິດ-ສັງຄົມ.

**ມາດຕາ 6 ເຂດຫວງຫ້າມ**

ເຂດຫວງຫ້າມ ແມ່ນ ເນື້ອທີ່ສ່ວນໜຶ່ງ ຢູ່ບໍລິເວນຊາຍແດນ ຊຶ່ງຖືກກຳນົດເພື່ອ ຄຸ້ມຄອງ, ປ້ອງກັນ ແລະ ປົກປັກຮັກສາ ຄວາມໝັ້ນຄົງ, ຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ລວມທັງ ສະກັດກັ້ນ ແລະ ຕ້ານການ ຮຸກຮານ, ທຳລາຍ, ຂຸດຄົ້ນ, ເກັບກຳຄວາມລັບຂອງຊາດ.

**ມາດຕາ 7 ປ້າຍບົ່ງບອກບໍລິເວນຊາຍແດນ**

ປ້າຍບົ່ງບອກບໍລິເວນຊາຍແດນ ເປັນແຜ່ນໂລຫະ ທີ່ມີຄວາມໜາ 1.5 ມິນລີແມັດ, ເສົາ ເປັນທໍ່ໂລຫະ ທີ່ມີເສັ້ນຜ່າສູນກາງ 100 ມິນລີແມັດ, ໜາ 2 ມິນລີແມັດ, ສູງຈາກໜ້າດິນ 1.8 ແມັດ, ເປັນລາຍສີຂາວ ແລະ ແດງ ທີ່ສາມາດສະທ້ອນແສງໄຟ, ພື້ນປ້າຍ ເປັນສີຟ້າ ແລະ ຕົວໜັງສື ສີຂາວ ທີ່ສາມາດສະທ້ອນແສງໄຟ, ຕົວໜັງສືທີ່ຂຽນຢູ່ປ້າຍມີ ສາມ ແຖວ ຊຶ່ງ ແຖວທີໜຶ່ງ ຂຽນເປັນພາສາລາວ, ແຖວທີສອງ ຂຽນເປັນພາສາຂອງປະເທດເຊື່ອມໜ້າ ແລະ ແຖວທີສາມ ຂຽນເປັນພາສາອັງກິດ. ຂະໜາດ ແລະ ຕົວໜັງສື ຂອງປ້າຍ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ປ້າຍບົ່ງບອກບໍລິເວນຊາຍແດນ ປະກອບມີ ປ້າຍບົ່ງບອກ "ບໍລິເວນຊາຍແດນ", "ຂອບເຂດຊາຍແດນ" ແລະ "ເຂດຫວງຫ້າມ".

ການຕິດຕັ້ງປ້າຍບົ່ງບອກບໍລິເວນຊາຍແດນ ໃຫ້ປະຕິບັດ ດັ່ງນີ້:

1. ປ້າຍ "ບໍລິເວນຊາຍແດນ" ຕ້ອງຕິດຕັ້ງຢູ່ເຂດຕໍ່ກັນ ລະຫວ່າງ ບ້ານ ທີ່ມີເຂດແດນຕິດກັບບໍລິເວນຊາຍແດນ ກັບ ບ້ານພາຍໃນ ແລະ ຕິດຕັ້ງຢູ່ສະຖານທີ່ ແນມເຫັນໄດ້ງ່າຍ, ຂ້າງທາງຈະລາຈອນ ທາງບົກ, ທາງລົດໄຟ ແລະ ທາງນ້ຳ ທີ່ຈະເຂົ້າໄປບໍລິເວນຊາຍແດນ.

2. ປ້າຍ "ຂອບເຂດຊາຍແດນ" ຢູ່ບໍລິເວນຊາຍແດນ ທີ່ມີລັກສະນະເປັນພູດອຍ, ປ່າດົງ ຊຶ່ງມີຄວາມຫຍຸ້ງຍາກໃນການເດີນທາງເຂົ້າ-ອອກ ຕ້ອງຕິດຕັ້ງຢູ່ເບື້ອງຂວາມື ຂອງເສັ້ນທາງຈາລະຈອນ ຕາມທິດເຂົ້າໄປຊາຍແດນ. ສຳລັບ ຢູ່ບໍລິເວນຊາຍແດນ ທີ່ເປັນທົ່ງພຽງ, ຍາກທີ່ຈະຈຳແນກເຂດແດນ ຕ້ອງຕິດຕັ້ງ ປ້າຍ "ຂອບເຂດຊາຍແດນ" ໄລຍະຫ່າງກັນ ແຕ່ 600 ແມັດ ຫາ 1,000 ແມັດ ແລະ ຕ້ອງຕິດຕັ້ງຢູ່ສອງຟາກ ຂອງເຂດແດນບໍລິເວນດ່ານ, ບໍ່ໃຫ້ຕິດຕັ້ງຢູ່ຕາມເສັ້ນທາງຈະລາຈອນ ແຕ່ພາຍໃນ ອອກໄປຫາດ່ານຊາຍແດນ;

3. ປ້າຍ "ເຂດຫວງຫ້າມ" ຕ້ອງຕິດຕັ້ງຢູ່ບ່ອນທີ່ມີຄວາມເໝາະສົມ ແລະ ແນມເຫັນໄດ້ງ່າຍ ໂດຍອີງໃສ່ພູມມີປະເທດ ແລະ ລັກສະນະສະເພາະ ຂອງເຂດຫວງຫ້າມ.

## ໝວດທີ 3
## ການເຄື່ອນໄຫວຢູ່ບໍລິເວນຊາຍແດນ

### ມາດຕາ 8 ການ ຢູ່ອາໄສ ແລະ ປະຕິບັດໜ້າທີ່ຢູ່ບໍລິເວນຊາຍແດນ

ບຸກຄົນ ທີ່ໄດ້ຮັບອະນຸຍາດ ໃຫ້ຢູ່ອາໄສ ແລະ ປະຕິບັດໜ້າທີ່ ຢູ່ບໍລິເວນຊາຍແດນ ມີ ດັ່ງນີ້:

1. ປະຊາຊົນຊາຍແດນ;

2. ຜູ້ທີ່ໄດ້ຮັບໜັງສືອະນຸຍາດໃຫ້ອາໄສຢູ່ບໍລິເວນຊາຍແດນ ຈາກໜ່ວຍງານທີ່ມີສິດ ຂອງຂະແໜງການປ້ອງກັນຄວາມສະຫງົບ;

3. ພະນັກງານ, ເຈົ້າໜ້າທີ່ ທີ່ໄດ້ຮັບມອບໝາຍໃຫ້ປະຕິບັດໜ້າທີ່ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ວິຊາສະເພາະອື່ນ;

4. ບຸກຄົນ ທີ່ບໍ່ຖືກ ມາດຕະການທາງດ້ານບໍລິຫານ, ມາດຕະການບັງຄັບ ຫຼື ຖືກລົງໂທດ ເປັນຕົ້ນ ຜູ້ທີ່ຖືກໂຈະ ຫຼື ຫ້າມ ອອກນອກປະເທດ, ຜູ້ທີ່ຖືກສານຕັດສິນລົງໂທດຕັດອິດສະຫຼະພາບ ແຕ່ຍັງບໍ່ທັນມີຄຳຕົກລົງໃຫ້ຈັດຕັ້ງປະຕິບັດຄຳຕັດສິນ, ຜູ້ທີ່ຖືກລົງໂທດ ຈຳກັດທີ່ຢູ່, ຜູ້ທີ່ຖືກໂຈະການປະຕິບັດໂທດ, ຜູ້ທີ່ກຳລັງຢູ່ໃນການຄວບຄຸມການປະພຶດ ແລະ ບຸກຄົນອື່ນ ທີ່ບໍ່ຖືກຫ້າມ ອາໄສຢູ່ບໍລິເວນຊາຍແດນ.

### ມາດຕາ 9 ການເຂົ້າ-ອອກ ແລະ ເດີນທາງຜ່ານ ບໍລິເວນຊາຍແດນ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຈະເຂົ້າໄປ, ພັກເຊົາຊົ່ວຄາວ ຢູ່ບໍລິເວນຊາຍແດນ ໃຫ້ປະຕິບັດດັ່ງນີ້:

1. ພົນລະເມືອງລາວ ທີ່ບໍ່ແມ່ນປະຊາຊົນຊາຍແດນ ຈະເຂົ້າໄປ, ພັກເຊົາຊົ່ວຄາວ ຢູ່ບໍລິເວນຊາຍແດນ ຕ້ອງແຈ້ງ ບັດປະຈຳຕົວ ຫຼື ໜັງສືຢັ້ງຢືນຕົວຕົນອື່ນ ຕໍ່ໜ່ວຍງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕາແສງ ແລະ ບ້ານ ບໍລິເວນຊາຍແດນດັ່ງກ່າວ. ໃນກໍລະນີຢູ່ຄ້າງຄືນ ຕ້ອງໄດ້ຂໍອະນຸຍາດ ພັກເຊົາຊົ່ວຄາວ ນຳພາກສ່ວນດັ່ງກ່າວ.

2. ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ທີ່ໄດ້ຮັບອະນຸຍາດພັກເຊົາຊົ່ວຄາວ ຫຼື ດຳລົງຊີວິດຖາວອນ ຢູ່ ສປປ ລາວ ຈະເຂົ້າໄປ, ພັກເຊົາຊົ່ວຄາວ ຢູ່ບໍລິເວນຊາຍແດນ ຕ້ອງຂໍອະນຸຍາດເຂົ້າບໍລິເວນຊາຍແດນ ຈາກກອງບັນຊາການປ້ອງກັນຄວາມສະຫງົບຂັ້ນແຂວງ ບ່ອນທີ່ຕົນອາໄສຢູ່ ແລະ ໃນເວລາເຂົ້າບໍລິເວນຊາຍແດນ ຕ້ອງແຈ້ງໃບອະນຸຍາດ ຕໍ່ໜ່ວຍງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕາແສງ ແລະ ບ້ານບໍລິເວນຊາຍແດນດັ່ງກ່າວ.

ສຳລັບ ຄົນຕ່າງປະເທດ ທີ່ເປັນນັກການທູດ, ພະນັກງານຂອງອົງການຕ່າງປະເທດ ທີ່ຈະເຂົ້າບໍລິເວນຊາຍແດນ ຕ້ອງໄດ້ຮັບການເຫັນດີ ຈາກກະຊວງການຕ່າງປະເທດ ກ່ອນຂໍອະນຸຍາດຈາກກະຊວງປ້ອງກັນຄວາມສະຫງົບ ແລະ ໃນເວລາເຂົ້າບໍລິເວນຊາຍແດນ ຕ້ອງແຈ້ງໃບອະນຸຍາດ ຕໍ່ໜ່ວຍງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕາແສງ ແລະ ບ້ານ ບໍລິເວນຊາຍແດນດັ່ງກ່າວ.

3. ການຈັດຕັ້ງ ທີ່ຈະນຳພາ ຄະນະຜູ້ແທນ, ຄົນຕ່າງປະເທດ ທີ່ເປັນນັກການທູດ, ພະນັກງານຂອງອົງການຕ່າງປະເທດ ແລະ ພະນັກງານທີ່ກ່ຽວຂ້ອງ ທີ່ຈະເຂົ້າບໍລິເວນຊາຍແດນ ຕ້ອງໄດ້ຮັບການເຫັນດີ ຈາກກະຊວງການຕ່າງປະເທດ ກ່ອນການຂໍອະນຸຍາດຈາກກະຊວງປ້ອງກັນຄວາມສະຫງົບ ແລະ ໃນເວລາເຂົ້າບໍລິເວນຊາຍແດນ ຕ້ອງແຈ້ງໃບອະນຸຍາດ ຕໍ່ໜ່ວຍງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕາແສງ ແລະ ບ້ານ ບໍລິເວນຊາຍແດນດັ່ງກ່າວກ່ອນ ຊາວສີ່ ຊົ່ວໂມງ.

4. ປະຊາຊົນຊາຍແດນ ຂອງປະເທດໃກ້ຄຽງ ທີ່ໄດ້ຮັບອະນຸຍາດເຂົ້າມາ ສປປ ລາວ ແລ້ວ ຈະເຂົ້າໄປບໍລິເວນຊາຍແດນ ຕ້ອງໄດ້ຂໍອະນຸຍາດເຂົ້າບໍລິເວນຊາຍແດນ ຈາກກອງບັນຊາການປ້ອງກັນຄວາມສະຫງົບຂັ້ນແຂວງ ບ່ອນທີ່ບໍລິເວນຊາຍແດນຂຶ້ນກັບ ແລະ ໃນເວລາເຂົ້າບໍລິເວນຊາຍແດນ ຕ້ອງແຈ້ງໃບອະນຸຍາດ ຕໍ່ໜ່ວຍງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕາແສງ ແລະ ບ້ານ ບໍລິເວນຊາຍແດນດັ່ງກ່າວ.

ສຳລັບ ປະຊາຊົນຊາຍແດນປະເທດໃກ້ຄຽງ ທີ່ມີລະບຽບການຄຸ້ມຄອງຊາຍແດນ ລະຫວ່າງສອງປະເທດ ໃຫ້ປະຕິບັດຕາມລະບຽບການດັ່ງກ່າວ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຂົ້າໄປບໍລິເວນຊາຍແດນ ພາຍຫຼັງສິ້ນສຸດກຳນົດເວລາທີ່ໄດ້ຮັບອະນຸຍາດເຂົ້າໄປບໍລິເວນຊາຍແດນ ຕ້ອງອອກຈາກບໍລິເວນຊາຍແດນ ທັນທີ ພ້ອມທັງແຈ້ງໃຫ້ເຈົ້າໜ້າທີ່ທີ່ກ່ຽວຂ້ອງຊາບ.

ສຳລັບການເດີນທາງຜ່ານບໍລິເວນຊາຍແດນ ຕ້ອງແຈ້ງໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ບ່ອນທີ່ເດີນທາງຜ່ານຊາບ.

### ມາດຕາ 10 ການເຄື່ອນໄຫວຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ແລະ ການນຳໃຊ້ຍານພາຫະນະ ຢູ່ບໍລິເວນຊາຍແດນ

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ນຳໃຊ້ຍານພາຫະນະຢູ່ບໍລິເວນຊາຍແດນ ຕ້ອງປະຕິບັດຕາມການແນະນຳ, ມີການ ຄຸ້ມຄອງ, ຕິດຕາມ ກວດກາ ຈາກກອງຮ້ອຍທະຫານຊາຍແດນ, ໜ່ວຍງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕາແສງ ປະຈຳພື້ນທີ່ ແລະ ກອງກຳລັງວິຊາສະເພາະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ນຳໃຊ້ຍານພາຫະນະຢູ່ ເຂດທ່ອງທ່ຽວ, ເຂດບໍລິການ, ເຂດການຄ້າ ແລະ ເຂດເສດຖະກິດ ຢູ່ບໍລິເວນດ່ານຊາຍແດນ, ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດອື່ນ ທີ່ສ້າງຂຶ້ນຢູ່ບໍລິເວນຊາຍແດນ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ປະຊາຊົນຊາຍແດນ ຂອງປະເທດໃກ້ຄຽງ ທີ່ເຄື່ອນໄຫວຢູ່ບໍລິເວນຊາຍແດນ ຂອງ ສປປ ລາວ ຕ້ອງປະຕິບັດຕາມລະບຽບການຄຸ້ມຄອງຊາຍແດນລະຫວ່າງສອງປະເທດ ແລະ/ຫຼື ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງຂອງ ສປປ ລາວ.

### ມາດຕາ 11 ໂຄງການພັດທະນາ ແລະ ກິດຈະການ ຢູ່ບໍລິເວນຊາຍແດນ

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງ ດຳເນີນ ໂຄງການພັດທະນາ ແລະ ກິດຈະການ ຢູ່ບໍລິເວນຊາຍແດນ ຕ້ອງໄດ້ຮັບການເຫັນດີຈາກກະຊວງການຕ່າງປະເທດ, ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ກ່ອນສະເໜີອົງການທີ່ມີສິດ ພິຈາລະນາ. ພາຍຫຼັງມີການພິຈາລະນາເຫັນດີແລ້ວ ຈຶ່ງດຳເນີນຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

ຂະແໜງການທີ່ອະນຸຍາດ ໂຄງການພັດທະນາ ແລະ ກິດຈະການ ຕ້ອງແຈ້ງ ກະຊວງການຕ່າງປະເທດ, ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ແລະ ຄະນະກຳມະການປົກຄອງຂັ້ນແຂວງ ບ່ອນທີ່ຈະດຳເນີນໂຄງການພັດທະນາ ແລະ ກິດຈະການ ເພື່ອ ຄຸ້ມຄອງ, ຕິດຕາມ ກວດກາ.

ຜູ້ດຳເນີນ ໂຄງການພັດທະນາ ແລະ ກິດຈະການ ຕ້ອງແຈ້ງເປັນລາຍລັກອັກສອນ ໃຫ້ຫ້ອງທະຫານຊາຍແດນຂັ້ນແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບຂັ້ນແຂວງ ແລະ ອົງການປົກຄອງທ້ອງຖິ່ນ ບ່ອນທີ່ ໂຄງການພັດທະນາ ແລະ ກິດຈະການ ຕັ້ງຢູ່ ພາຍໃນ ສາມ ວັນລັດຖະການ ກ່ອນວັນດຳເນີນ ໂຄງການພັດທະນາ ຫຼື ກິດຈະການ.

ຜູ້ດຳເນີນ ໂຄງການພັດທະນາ ແລະ ກິດຈະການ ຢູ່ບໍລິເວນຊາຍແດນ ຕ້ອງແຈ້ງ ກ່ຽວກັບ ບັນຊີລາຍຊື່ຄົນ, ຍານພາຫະນະ, ກຳນົດເວລາ, ຂອບເຂດ ແລະ ເນື້ອດຳເນີນ ໂຄງການພັດທະນາ ແລະ ກິດຈະການ ໃຫ້ກອງຮ້ອຍທະຫານຊາຍແດນ, ຄະນະກຳມະການປົກຄອງຕາແສງ ປະຈຳພື້ນທີ່ ພາຍໃນ ສາມ ວັນລັດຖະການ ກ່ອນວັນດຳເນີນ ໂຄງການພັດທະນາ ຫຼື ກິດຈະການ.

ອົງການລັດທີ່ກ່ຽວຂ້ອງ ແລະ ຜູ້ດຳເນີນ ໂຄງການພັດທະນາ ແລະ ກິດຈະການ ຢູ່ບໍລິເວນຊາຍແດນ ຕ້ອງປະຕິບັດຕາມລະບຽບການຄຸ້ມຄອງຊາຍແດນລະຫວ່າງສອງປະເທດ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງຂອງ ສປປ ລາວ.

### ມາດຕາ 12 ການຢຸດຕິຊົ່ວຄາວ ການເຄື່ອນໄຫວຢູ່ບໍລິເວນຊາຍແດນ

ການຢຸດຕິຊົ່ວຄາວ ການເຄື່ອນໄຫວຢູ່ບໍລິເວນຊາຍແດນ ແມ່ນ ການຢຸດຕິ ການ ເຂົ້າ-ອອກ, ເດີນທາງຜ່ານ, ງານຕະຫຼາດນັດ, ບຸນປະເພນີ, ການ ຜະລິດ, ດຳເນີນທຸລະກິດ, ກໍ່ສ້າງ, ສຳຫຼວດ ແລະ ຂຸດຄົ້ນຊັບພະຍາກອນ ແລະ ການເຄື່ອນໄຫວອື່ນ ຢູ່ບໍລິເວນຊາຍແດນ.

ການຢຸດຕິຊົ່ວຄາວ ການເຄື່ອນໄຫວຢູ່ບໍລິເວນຊາຍແດນ ມີກໍລະນີ ດັ່ງນີ້:

1. ມີຂໍ້ຂັດແຍ່ງ ກ່ຽວກັບ ຊາຍແດນ, ດິນແດນ ຊຶ່ງມີຄວາມສ່ຽງເປັນໄພຂົ່ມຂູ່ຕໍ່ ອະທິປະໄຕ, ຄວາມໝັ້ນຄົງຂອງຊາຍແດນແຫ່ງຊາດ;

2. ມີການປະທະກັນທາງອາວຸດ ຫຼື ເຫດການ ທີ່ສົ່ງຜົນກະທົບຕໍ່ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພຂອງສັງຄົມ ຢູ່ບໍລິເວນຊາຍແດນ;

3. ມີໄພພິບັດທາງທຳມະຊາດ, ອຸບັດຕິເຫດ, ພະຍາດລະບາດ, ເຫດການ ທາດເຄມີ ຫຼື ກຳມັນຕະພາບລັງສີ ຮົ່ວໄຫຼ ຊຶ່ງມີຄວາມສ່ຽງ ເປັນອັນຕະລາຍຕໍ່ຊຸມຊົນ ແລະ ມີພະຍາດແຜ່ລະບາດ ຂ້າມຊາຍແດນ;

4. ໄດ້ຮັບແຈ້ງ ຈາກ ລັດຖະບານ, ອົງການປົກຄອງທ້ອງຖິ່ນ ຫຼື ກຳລັງປ້ອງກັນຊາຍແດນຂອງປະເທດໃກ້ຄຽງ ກ່ຽວກັບ ການຢຸດຕິຊົ່ວຄາວ ການເດີນທາງ ເຂົ້າ-ອອກ ຊາຍແດນ.

ການຢຸດຕິຊົ່ວຄາວ ການເຄື່ອນໄຫວຢູ່ບໍລິເວນຊາຍແດນ ຕ້ອງພິຈາລະນາ ເງື່ອນໄຂ ດັ່ງນີ້:

1. ລັກສະນະ ແລະ ລະດັບຄວາມຮ້າຍແຮງຂອງສະຖານະການທີ່ເກີດຂຶ້ນ, ໃນກໍລະນີ ເງື່ອນໄຂ, ປັດໄຈທີ່ຈະຢຸດຕິຊົ່ວຄາວ ຍັງບໍ່ຄົບຖ້ວນ ຕ້ອງໄດ້ ສືບສວນ, ຊອກຫາ ແລະ ຄົ້ນຄວ້າ ສະພາບການຕົວຈິງ ກ່ອນຕົກລົງຢຸດຕິຊົ່ວຄາວ;

2. ຄາດຄະເນຜົນກະທົບ ຕໍ່ການເຄື່ອນໄຫວ ຂອງ ອົງການ, ການຈັດຕັ້ງ ແລະ ປະຊາຊົນ ຢູ່ ບໍລິເວນຊາຍແດນ ພາຍຫຼັງທີ່ໄດ້ຕົກລົງຢຸດຕິຊົ່ວຄາວ ເພື່ອອອກມາດຕະການທີ່ເໝາະສົມ.

3. ກຳນົດ ເວລາ, ຂອບເຂດບໍລິເວນ ທີ່ຕ້ອງຢຸດຕິຊົ່ວຄາວການເຄື່ອນໄຫວ ຕາມແຜນທີ່, ໃນພາກສະໜາມ ຫຼື ພື້ນທີ່ຕົວຈິງ.

ຜູ້ມີສິດຕົກລົງ ຢຸດຕິຊົ່ວຄາວ ການເຄື່ອນໄຫວຢູ່ບໍລິເວນຊາຍແດນ ມີ ດັ່ງນີ້:

1. ຫົວໜ້າກອງຮ້ອຍ ທະຫານຊາຍແດນ ຕົກລົງຢຸດຕິຊົ່ວຄາວ ບໍ່ເກີນ ສິບສອງ ຊົ່ວໂມງ ໃນຂອບເຂດຊາຍແດນ ທີ່ຢູ່ໃນພື້ນທີ່ຕົນຮັບຜິດຊອບ ແລະ ຕ້ອງລາຍງານ ການຢຸດຕິຊົ່ວຄາວ ໃຫ້ຫົວໜ້າຫ້ອງທະຫານຊາຍແດນຂັ້ນແຂວງ, ພະແນກການຕ່າງປະເທດ ພ້ອມທັງແຈ້ງເປັນລາຍລັກອັກສອນ ໃຫ້ຄະນະກຳມະການປົກຄອງຂັ້ນເມືອງ, ອົງການ ທີ່ກ່ຽວຂ້ອງ ແລະ ຄະນະກຳມະການປົກຄອງຕາແສງ ທີ່ຮັບຜິດຊອບບໍລິເວນຊາຍແດນດັ່ງກ່າວລວມທັງແຈ້ງ ອົງການ, ກົມກອງ ທີ່ເຮັດໜ້າທີ່ຄຸ້ມຄອງ, ປ້ອງກັນຊາຍແດນ ຂອງປະເທດໃກ້ຄຽງ;

2. ຫົວໜ້າຫ້ອງທະຫານຊາຍແດນຂັ້ນແຂວງ ຕົກລົງຢຸດຕິຊົ່ວຄາວ ບໍ່ເກີນ ຊາວສີ່ ຊົ່ວໂມງ ໃນບໍລິເວນຊາຍແດນ ທີ່ຢູ່ໃນຂອບເຂດການຄຸ້ມຄອງຂອງຕົນ ແລະ ຕ້ອງລາຍງານ ການຢຸດຕິຊົ່ວຄາວ ເປັນລາຍລັກອັກສອນ ໃຫ້ຄະນະກຳມະການປົກຄອງຂັ້ນແຂວງ ພ້ອມທັງແຈ້ງເປັນລາຍລັກອັກສອນ ໃຫ້ ພະແນກການຕ່າງປະເທດ, ກອງບັນຊາການທະຫານຊາຍແດນ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ແລະ ອົງການ, ກົມກອງ ທີ່ເຮັດໜ້າທີ່ຄຸ້ມຄອງ, ປ້ອງກັນຊາຍແດນ ຂອງປະເທດໃກ້ຄຽງ.

ໃນກໍລະນີ ສິ້ນສຸດກຳນົດເວລາ ຊາວສີ່ ຊົ່ວໂມງ, ຖ້າເຫັນວ່າ ມີຄວາມຈຳເປັນຕ້ອງໄດ້ສືບຕໍ່ ຢຸດຕິຊົ່ວຄາວ ການເຄື່ອນໄຫວຢູ່ບໍລິເວນຊາຍແດນ ໃຫ້ຫົວໜ້າຫ້ອງທະຫານຊາຍແດນຂັ້ນແຂວງ ສະເໜີຕໍ່ປະທານຄະນະກຳມະການປົກຄອງຂັ້ນແຂວງ ເປັນຜູ້ຕົກລົງ, ກຳນົດເວລາສືບຕໍ່ ຢຸດຕິຊົ່ວຄາວ ການເຄື່ອນໄຫວຢູ່ບໍລິເວນຊາຍແດນ ຕ້ອງບໍ່ເກີນ ຊາວສີ່ ຊົ່ວໂມງ.

ຂັ້ນຕອນ ການຢຸດຕິຊົ່ວຄາວ ການເຄື່ອນໄຫວຢູ່ບໍລິເວນຊາຍແດນ ໃຫ້ປະຕິບັດ ດັ່ງນີ້:

1. ອອກຂໍ້ຕົກລົງ ຢຸດຕິຊົ່ວຄາວ;
2. ອອກແຈ້ງການຢຸດຕິຊົ່ວຄາວ;
3. ຊີ້ນຳ ແລະ ຕິດຕາມສະພາບການ ຢູ່ບໍລິເວນຢຸດຕິຊົ່ວຄາວ ຢ່າງໃກ້ຊິດ ເພື່ອແນະນຳໃຫ້ທຸກຄົນປະຕິບັດ, ແກ້ໄຂ ສະຖານະການທີ່ເກີດຂຶ້ນ ຕາມກົດໝາຍ.

ການຍົກເລີກ ການຢຸດຕິຊົ່ວຄາວ ການເຄື່ອນໄຫວຢູ່ບໍລິເວນຊາຍແດນ ມີກໍລະນີ ດັ່ງນີ້:

1. ສິ້ນສຸດກຳນົດເວລາ ຢຸດຕິຊົ່ວຄາວ;
2. ສະພາບການ ກັບຄືນສູ່ປົກກະຕິ.

ການຍົກເລີກ ການຢຸດຕິຊົ່ວຄາວ ການເຄື່ອນໄຫວຢູ່ບໍລິເວນຊາຍແດນ ຕ້ອງອອກຂໍ້ຕົກລົງ ຍົກເລີກຂໍ້ຕົກລົງ ການຢຸດຕິຊົ່ວຄາວ ການເຄື່ອນໄຫວຢູ່ບໍລິເວນຊາຍແດນ ພ້ອມທັງແຈ້ງໃຫ້ອົງການທີ່ກ່ຽວຂ້ອງ, ກົມກອງ ທີ່ເຮັດໜ້າທີ່ຄຸ້ມຄອງ, ປ້ອງກັນຊາຍແດນຂອງປະເທດໃກ້ຄຽງ ແລະ ແຈ້ງຜ່ານສື່ມວນຊົນ ໃຫ້ປະຊາຊົນຊາບ.

**ມາດຕາ 13 ການເຄື່ອນໄຫວຢູ່ຂອບເຂດຊາຍແດນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ກຳນົດໄວ້ໃນ ຂໍ້ 1, 2, 3 ມາດຕາ 8 ຂອງດຳລັດສະບັບນີ້ ທີ່ຈະເຂົ້າໄປ ຂອບເຂດຊາຍແດນ ຕ້ອງໄດ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 1 ມາດຕາ 9 ຂອງດຳລັດສະບັບນີ້.

ສຳລັບ ບຸກຄົນ ທີ່ໄດ້ກຳນົດໄວ້ໃນ ຂໍ້ 4 ມາດຕາ 8 ຂອງດຳລັດສະບັບນີ້ ທີ່ຈະເຂົ້າໄປ ຂອບເຂດຊາຍແດນ ນອກຈາກປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ວັກໜຶ່ງ ຂອງມາດຕານີ້ ຕ້ອງໄດ້ຮັບການເຫັນດີ ແລະ ຢູ່ພາຍໃຕ້ການ ຄຸ້ມຄອງ, ຕິດຕາມ ກວດກາ ຂອງກອງຮ້ອຍທະຫານຊາຍແດນ ປະຈຳພື້ນທີ່. ໃນກໍລະນີ ຕ້ອງຢູ່ຄ້າງຄືນ ຕ້ອງໄປລົງທະບຽນພັກເຊົາຊົ່ວຄາວ ນຳໜ່ວຍງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕາແສງ, ຈາກນັ້ນແຈ້ງເປັນລາຍລັກອັກສອນ ໃຫ້ກອງຮ້ອຍທະຫານຊາຍແດນ ປະຈຳພື້ນທີ່ ເພື່ອ ຄຸ້ມຄອງ, ຕິດຕາມ ກວດກາ ການເຄື່ອນໄຫວຂອງບຸກຄົນດັ່ງກ່າວ.

**ມາດຕາ 14 ການເຄື່ອນໄຫວຢູ່ເຂດຫວງຫ້າມ**

ພົນລະເມືອງລາວ, ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ທີ່ເຄື່ອນໄຫວຢູ່ເຂດຫວງຫ້າມ ຕ້ອງຢູ່ພາຍໃຕ້ການ ຄຸ້ມຄອງ, ຕິດຕາມ ກວດກາ ຂອງກອງຮ້ອຍທະຫານຊາຍແດນ ປະຈຳພື້ນທີ່ ແລະ ປະຕິບັດຕາມລະບຽບການປ້ອງກັນສະເພາະ ຢ່າງເຂັ້ມງວດ.

ສຳລັບ ໂຄງການພັດທະນາ ແລະ ກິດຈະການ, ການຜະລິດ, ການຂຸດຄົ້ນຊັບພະຍາກອນທຳມະຊາດ ບໍ່ອະນຸຍາດໃຫ້ດຳເນີນໃນເຂດຫວງຫ້າມ.

## ໝວດທີ 4
## ຂໍ້ຫ້າມ

**ມາດຕາ 15 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ເຄື່ອນໄຫວ ຢູ່ບໍລິເວນຊາຍແດນ ມີພຶດຕິກຳ ດັ່ງນີ້:

1. ເຄື່ອນຍ້າຍ, ທຳລາຍ ຫຼື ເຮັດໃຫ້ຫຼັກໝາຍຊາຍແດນແຫ່ງຊາດ, ເຄື່ອງໝາຍຊີ້ບອກເສັ້ນຊາຍແດນ ລວມທັງປ້າຍບົ່ງບອກ ບໍລິເວນຊາຍແດນ, ຂອບເຂດຊາຍແດນ, ເຂດຫວງຫ້າມ, ການກໍ່ສ້າງຢູ່ບໍລິເວນຊາຍແດນ ສູນຫາຍ ຫຼື ເປ່ເພ;

2. ເຮັດໃຫ້ ພູມີປະເທດ, ເສັ້ນທາງລາດຕະເວນ ຢູ່ສອງຟາກຂອງຊາຍແດນ, ທິດທາງການໄຫຼຂອງແມ່ນ້ຳຕາມທຳມະຊາດ ບໍລິເວນເສັ້ນຊາຍແດນແຫ່ງຊາດ, ບໍລິເວນຊາຍແດນ, ຂອບເຂດຊາຍແດນ, ເຂດຫວງຫ້າມ ມີການປ່ຽນແປງ, ເຮັດໃຫ້ ແຫຼ່ງນ້ຳ ບົກແຫ້ງ ຫຼື ນ້ຳຖ້ວມ;

3. ສ້າງມົນລະພິດທາງນ້ຳ ຕາມແມ່ນ້ຳ, ໜອງນ້ຳ, ຄອງນ້ຳ ຫຼື ສ້າງຜົນກະທົບຕໍ່ສິ່ງແວດລ້ອມ ຢູ່ບໍລິເວນຊາຍແດນ;

4. ພັກອາໄສ, ຂຸດຄົ້ນເຄື່ອງປ່າຂອງດົງ, ສຳຫຼວດ, ບິນຖ່າຍພາບທາງອາກາດ ແລະ ຂຸດຄົ້ນແຮ່ທາດ ແລະ ດຳເນີນການປະມົງ ທີ່ບໍ່ໄດ້ຮັບອະນຸຍາດ;

5. ຂ້າມຜ່ານຊາຍແດນ ເພື່ອທຳການຜະລິດກະສິກຳ ແລະ ລ່າສັດ;

6. ຝັງສົບ, ເຄື່ອນຍ້າຍຂຸມຝັງສົບ, ເຄື່ອນຍ້າຍຊາກສົບ, ກະດູກ, ພືດ, ສັດ, ຊາກສັດ ຜ່ານຊາຍແດນ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການທີ່ມີສິດ ຂອງ ສປປ ລາວ;

7. ຍິງປືນຂ້າມຊາຍແດນ, ເຮັດໃຫ້ເກີດລະເບີດ, ຕັດ, ຈູດ ຕົ້ນໄມ້ ຫຼື ບຸກເບີກພື້ນທີ່ປ່າໄມ້ ຢູ່ຂອບເຂດຊາຍແດນ;

8. ຖ່າຍວີດີໂອ, ຖ່າຍຮູບ, ບັນທຶກສຽງ, ສຳຫຼວດ ແລະ ແຕ້ມຮູບທິວທັດ ຢູ່ເຂດຫວງຫ້າມ ໃນບໍລິເວນຊາຍແດນ;

9. ໃຫ້, ເປັນສື່ກາງໃນການໃຫ້ ສິນບົນ ແກ່ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່;

10. ລັກລອບຂົນສົ່ງ, ເຄື່ອນຍ້າຍສິນຄ້າທີ່ຜິດກົດໝາຍ, ຄ້າຂາຍເຖື່ອນ ຂ້າມຊາຍແດນ;

11. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍຂອງ ສປປ ລາວ ແລະ/ຫຼື ລະບຽບການຄຸ້ມຄອງຊາຍແດນ ລະຫວ່າງ ສປປ ລາວ ແລະ ປະເທດໃກ້ຄຽງ.

**ມາດຕາ 16 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ຕົກລົງ ປ່ຽນແປງເສັ້ນຊາຍແດນແຫ່ງຊາດ ຫຼື ເຮັດໃຫ້ຊາຍແດນແຫ່ງຊາດ ມີການປ່ຽນແປງ ໂດຍບໍ່ຖືກຕ້ອງ;

2. ຮັບ, ເປັນສື່ກາງໃນການໃຫ້ ແລະ ຮັບ ສິນບົນ;

3. ເມີນເສີຍຕໍ່ການລັກລອບເຂົ້າບໍລິເວນຊາຍແດນ ຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ລວມທັງຍານພາຫະນະ ຫຼື ປ່ອຍໃຫ້ມີການຂົນສົ່ງຜິດກົດໝາຍຂ້າມຜ່ານຊາຍແດນ;

4. ບັງຄັບ, ນາບຂູ່ບຸກຄົນອື່ນ, ສວຍໃຊ້ ສິດ, ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ ຈາກວຽກງານຄຸ້ມຄອງບໍລິເວນຊາຍແດນ;

5. ເປີດເຜີຍຄວາມລັບ ກ່ຽວກັບ ວຽກງານວຽກງານຄຸ້ມຄອງບໍລິເວນຊາຍແດນ ໂດຍບໍ່ໄດ້ຮັບອະນຸຍາດ;

6. ປະລະໜ້າທີ່, ເມີນເສີຍ ໃນການປະຕິບັດວຽກງານຄຸ້ມຄອງບໍລິເວນຊາຍແດນ;

7. ອອກ ຄຳສັ່ງ, ລະບຽບການ ທີ່ຂັດກັບ ກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານຄຸ້ມຄອງບໍລິເວນຊາຍແດນ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ສົນທິສັນຍາ ກ່ຽວກັບ ຊາຍແດນ ແລະ ລະບຽບການ ຄຸ້ມຄອງຊາຍແດນ ລະຫວ່າງ ສປປ ລາວ ແລະ ປະເທດໃກ້ຄຽງ.

## ໝວດທີ 5
## ການ ຄຸ້ມຄອງ ແລະ ກວດກາ ວຽກງານບໍລິເວນຊາຍແດນ

### ມາດຕາ 17 ອົງການຄຸ້ມຄອງ ແລະ ກວດກາ

ອົງການຄຸ້ມຄອງ ແລະ ກວດກາ ວຽກງານບໍລິເວນຊາຍແດນ ປະກອບດ້ວຍ:

1. ກະຊວງການຕ່າງປະເທດ;
2. ກະຊວງປ້ອງກັນປະເທດ;
3. ກະຊວງປ້ອງກັນຄວາມສະຫງົບ;
4. ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ;
5. ກະຊວງອຸດສາຫະກຳ ແລະ ການຄ້າ;
6. ກະຊວງການເງິນ;
7. ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ທີ່ມີເຂດແດນການປົກຄອງຕິດກັບຊາຍແດນແຫ່ງຊາດ.

### ມາດຕາ 18 ສິດ ແລະ ໜ້າທີ່ ຂອງກະຊວງການຕ່າງປະເທດ

ໃນການຄຸ້ມຄອງ ແລະ ກວດກາ ວຽກງານບໍລິເວນຊາຍແດນ ກະຊວງການຕ່າງປະເທດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານບໍລິເວນຊາຍແດນ ເພື່ອສະເໜີລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານການເຄື່ອນໄຫວຢູ່ບໍລິເວນຊາຍແດນ ເປັນ ແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳ ພ້ອມທັງຈັດຕັ້ງປະຕິບັດ;
3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ ແລະ ລະບຽບການ, ແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳ ກ່ຽວກັບການເຄື່ອນໄຫວຢູ່ບໍລິເວນຊາຍແດນ;
4. ເປັນເຈົ້າການປະສານສົມທົບກັບ ກະຊວງ, ຂະແໜງການ, ຄະນະກຳມະການປົກຄອງແຂວງທີ່ມີເຂດການປົກຄອງຕິດກັບຊາຍແດນແຫ່ງຊາດ ໃນການຈັດຕັ້ງປະຕິບັດສົນທິສັນຍາ ກ່ຽວກັບ ຊາຍແດນ, ດິນແດນ ບົນພື້ນຖານສົນທິສັນຍາ ກ່ຽວກັບການກຳນົດເສັ້ນຊາຍແດນແຫ່ງຊາດ ທີ່ ສປປ ລາວ ເປັນພາຄີ;
5. ມີຄຳເຫັນຕໍ່ການສະເໜີ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວຢູ່ບໍລິເວນຊາຍແດນ;
6. ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການ, ຄະນະກຳມະການປົກຄອງຂັ້ນແຂວງ ທີ່ມີເຂດການປົກຄອງຕິດກັບຊາຍແດນແຫ່ງຊາດ ໃນການເຈລະຈາ, ແກ້ໄຂບັນຫາທີ່ເກີດຂຶ້ນ ທີ່ພົວພັນກັບອະທິປະໄຕຂອງຊາດ ແລະ ຊາຍແດນ;
7. ປະສານສົມທົບກັບກະຊວງປ້ອງກັນປະເທດ ໃນການສ້າງກົນໄກປະສານງານ ກ່ຽວກັບ ການແກ້ໄຂສະພາບການ, ການສະໜອງຂໍ້ມູນ ຂ່າວສານ, ເອກະສານ, ແນະນຳວຽກງານການຕ່າງປະເທດ, ວຽກງານສະຫຼຸບສັງລວມບັນຫາ ທີ່ກ່ຽວຂ້ອງກັບ ການສ້າງ, ຄຸ້ມຄອງ ແລະ ປ້ອງ ບໍລິເວນຊາຍແດນ;
8. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານບໍລິເວນຊາຍແດນ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 19 ສິດ ແລະ ໜ້າທີ່ຂອງກະຊວງປ້ອງກັນປະເທດ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານການເຄື່ອນໄຫວ ຢູ່ບໍລິເວນຊາຍແດນ ກະຊວງປ້ອງກັນປະເທດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ, ປັບປຸງ ແຜນຍຸດທະສາດ, ນະໂຍບາຍ ແລະ ນິຕິກຳທີ່ກ່ຽວຂ້ອງກັບການເຄື່ອນໄຫວ ຢູ່ບໍລິເວນຊາຍແດນ;

2. ຈັດຕັ້ງຜັນຂະຫຍາຍແຜນຍຸດທະສາດ, ນະໂຍບາຍ ແລະ ນິຕິກຳ ກ່ຽວກັບ ບໍລິເວນຊາຍແດນ ເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ພ້ອມທັງ ປະຕິບັດໃຫ້ມີປະສິດທິຜົນສູງ;

3. ໂຄສະນາ ເຜີຍແຜ່ ແຜນຍຸດທະສາດ, ນະໂຍບາຍ ແລະ ນິຕິກຳ ກ່ຽວກັບວຽກງານບໍລິເວນຊາຍແດນ ໃນຂອບເຂດທົ່ວປະເທດ;

4. ຊີ້ນຳ ກອງບັນຊາການທະຫານຂັ້ນແຂວງ, ຫ້ອງທະຫານຊາຍແດນຂັ້ນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການກຳນົດ ເຂດຫວງຫ້າມ ຢູ່ບໍລິເວນຊາຍແດນ;

5. ຄຸ້ມຄອງ ແລະ ປົກປັກຮັກສາ ເສັ້ນຊາຍແດນແຫ່ງຊາດ, ຫຼັກໝາຍຊາຍແດນ ແລະ ປ້າຍບົ່ງບອກຊາຍແດນແຫ່ງຊາດ ຢູ່ບໍລິເວນຊາຍແດນ;

6. ປະສານສົມທົບກັບ ກະຊວງການຕ່າງປະເທດ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງ ແລະ ອົງການລັດທຽບເທົ່າກະຊວງ ທີ່ກ່ຽວຂ້ອງ ສ້າງກົນໄກປະສານງານ ລະຫວ່າງບັນດາກຳລັງ ເພື່ອປະຕິບັດໜ້າທີ່ຄຸ້ມຄອງ, ປ້ອງກັນບໍລິເວນຊາຍແດນ;

7. ມີຄຳເຫັນຕໍ່ການສະເໜີຂອງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ຈະເຄື່ອນໄຫວຢູ່ບໍລິເວນຊາຍແດນ;

8. ເກັບກຳສະຖິຕິຄົນຕ່າງປະເທດ ທີ່ ເຂົ້າ-ອອກ ບໍລິເວນຊາຍແດນ, ຂອບເຂດຊາຍແດນ, ເຂດຫວງຫ້າມໃນແຕ່ລະປີ;

9. ປະສານສົມທົບກັບ ກະຊວງປ້ອງກັນຄວາມສະຫງົບ ໃນການ ຄຸ້ມຄອງ, ປ້ອງກັນ, ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ຢູ່ບໍລິເວນຊາຍແດນ.

10. ຊີ້ນຳກອງບັນຊາການທະຫານຊາຍແດນ ໃນການປະຕິບັດ ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນ ກ່ຽວກັບການຄຸ້ມຄອງການເຄື່ອນໄຫວຢູ່ບໍລິເວນຊາຍແດນ ຕາມກົດໝາຍ ແລະ ລະບຽບການ;

11. ຈັດຕັ້ງ-ນຳໃຊ້ ກຳລັງ, ຍານພາຫະນະ, ອາວຸດ, ຍຸດໂທປະກອນ ແລະ ເຄື່ອນໄຫວລາດຕະເວນ ເພື່ອກວດກາ, ຄວບຄຸມ ບຸກຄົນ, ນິຕິບກຄົນ ແລະ ການຈັດຕັ້ງ ລວມທັງ ຍານພາຫະນະ ທີ່ເຂົ້າບໍລິເວນຊາຍແດນ, ຂອບເຂດຊາຍແດນ;

12. ຕ້ານ ແລະ ສະກັດກັ້ນອາຊະຍາກຳ, ການຊື້-ຂາຍ, ເຄື່ອນຍ້າຍສິນຄ້າທີ່ຜິດກົດໝາຍ, ຢາເສບຕິດ, ການຄ້າອາວຸດເສິກ, ການຄ້າມະນຸດ, ການລັກລອບຂຸດຄົ້ນຊັບພະຍາກອນທຳມະຊາດ ແລະ ການກະທຳຜິດອື່ນຢູ່ບໍລິເວນຊາຍແດນ;

13. ປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການປະຕິບັດວຽກງານບໍລິເວນຊາຍແດນ;

14. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານບໍລິເວນຊາຍແດນ ໃຫ້ຄະນະກຳມາທິການຊາຍແດນແຫ່ງຊາດ ຢ່າງເປັນປົກກະຕິ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 20 ສິດ ແລະ ໜ້າທີ່ ຂອງກະຊວງປ້ອງກັນຄວາມສະຫງົບ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານການເຄື່ອນໄຫວ ຢູ່ບໍລິເວນຊາຍແດນ ກະຊວງປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ກົດໝາຍ, ຄຳສັ່ງ, ລະບຽບການ ແລະ ທິດຊີ້ນຳຂອງຂັ້ນເທິງ ກ່ຽວກັບວຽກງານການເຄື່ອນໄຫວຢູ່ບໍລິເວນຊາຍແດນຢ່າງເຂັ້ມງວດ;

2. ຊີ້ນຳ ກອງບັນຊາການປ້ອງກັນຄວາມສະຫງົບຂັ້ນແຂວງ, ກຳລັງປ້ອງກັນຄວາມສະຫງົບ ໃນເຂດເສດຖະກິດພິເສດ, ກອງບັນຊາການປ້ອງກັນຄວາມສະຫງົບຂັ້ນເມືອງ ແລະ ໜ່ວຍງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຕາແສງ ໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຕາມຄວາມຮັບຜິດຊອບຂອງຕົນ ກ່ຽວກັບວຽກງານບໍລິເວນຊາຍແດນ ຕາມກົດໝາຍ ແລະ ລະບຽບການ;

3. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການແລກປ່ຽນ ຫຼື ສະໜອງຂໍ້ມູນ ຂ່າວສານ, ສະພາບການ, ການເຄື່ອນໄຫວຂອງ ບຸກຄົນ ຫຼື ກຸ່ມຄົນບໍ່ດີ ທີ່ລະເມີດກົດໝາຍ ແລະ ລະບຽບການ ຢູ່ບໍລິເວນຊາຍແດນ;

4. ມີຄຳເຫັນຕໍ່ການສະເໜີຂອງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ຈະເຄື່ອນໄຫວຢູ່ບໍລິເວນຊາຍແດນ;

5. ເປັນເຈົ້າການປະສານສົມທົບ ກັບ ກະຊວງ, ອົງການ, ຄະນະກຳມະການປົກຄອງຂັ້ນແຂວງ ທີ່ມີເຂດການປົກຄອງຕິດກັບຊາຍແດນແຫ່ງຊາດ ໃນການສ້າງແຜນການປ້ອງກັນຄວາມສະຫງົບແຫ່ງຊາດ, ສົມທົບແໜ້ນການປ້ອງກັນຄວາມສະຫງົບຊາຍແດນ ກັບ ການປ້ອງກັນຄວາມສະຫງົບພາຍໃນ;

6. ປະສານສົມທົບກັບກະຊວງປ້ອງກັນປະເທດ ໃນການແນະນຳທະຫານຊາຍແດນ ເຂົ້າຮ່ວມວຽກງານປົກປັກຮັກສາຄວາມໝັ້ນຄົງທາງດ້ານການເມືອງ, ປົກປັກຮັກສາຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນຊາຍແດນ;

7. ເປັນເຈົ້າການປະສານສົມທົບກັບກະຊວງປ້ອງກັນປະເທດ ໃນການວາງແຜນຍຸດທະສາດ, ຍຸດທະວິທີ ກ່ຽວກັບ ການຕ້ານ ແລະ ສະກັດກັ້ນ ອາຊະຍາກຳ ແລະ ການລະເມີດກົດໝາຍ ກ່ຽວກັບ ການປ້ອງກັນຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນຊາຍແດນ;

8. ເກັບກຳສະຖິຕິພົນລະເມືອງລາວ ແລະ ຄົນຕ່າງປະເທດ ຢູ່ບໍລິເວນຊາຍແດນ, ຂອບເຂດຊາຍແດນ, ເຂດຫວງຫ້າມ ໃນແຕ່ລະປີ;

9. ຄຸ້ມຄອງດ່ານຊາຍແດນ, ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນຊາຍແດນ;

10. ຊີ້ນຳ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ, ຂັ້ນເມືອງ ໃຫ້ປະສານສົມທົບກັບ ກອງບັນຊາການທະຫານຊາຍແດນ, ຫ້ອງທະຫານຊາຍແດນ ເພື່ອ ເຄື່ອນໄຫວລາດຕະເວນຮ່ວມ ໃນການປ້ອງກັນຄວາມສະຫງົບຊາຍແດນ ແລະ ການໂຄສະນາ, ເຜີຍແຜ່ກົດໝາຍ ແລະ ລະບຽບການ ກ່ຽວກັບ ການປົກປັກຮັກສາຄວາມສະຫງົບຊາຍແດນ, ການເຂົ້າ-ອອກ ສປປ ລາວ;

11. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານບໍລິເວນຊາຍແດນ ໃຫ້ຄະນະກຳມາທິການຊາຍແດນແຫ່ງຊາດ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 21 ສິດ ແລະ ໜ້າທີ່ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານບໍລິເວນຊາຍແດນ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສົມທົບກັບ ກະຊວງ, ອົງການ ໃນການເຄື່ອນໄຫວ ຕິດຕາມ ກວດກາ ການລົງທຶນພັດທະນາ ໂຄງລ່າງພື້ນຖານ ຢູ່ບໍລິເວນຊາຍແດນ;

2. ສົມທົບກັບອົງການປົກຄອງທ້ອງຖິ່ນ ສຳຫຼວດ ພື້ນທີ່ບໍລິເວນຊາຍແດນ, ເກັບກຳຂໍ້ມູນ ຄ່າພິກັດ, ຈຸດທີ່ຕັ້ງຂອງບ້ານຊາຍແດນ, ແຕ້ມແຜນທີ່ ບໍລິເວນພື້ນທີ່ ທີ່ມີການປ່ຽນແປງພູມມິປະເທດ ຢ່າງເປັນປົກກະຕິ ພ້ອມທັງສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອເອົາເຂົ້າໃສ່ແຜນທີ່ການປົກຄອງໃນແຕ່ລະໄລຍະ;

3. ສ້າງແຜນການ, ໂຄງການ ກ່ຽວກັບ ການສ້າງແຜນທີ່ ບໍລິເວນຊາຍແດນ, ຂອບເຂດຊາຍແດນ ແລະ ກຳນົດບ້ານບໍລິເວນຊາຍແດນ;

4. ຄຸ້ມຄອງ, ຕິດຕາມ ກວດກາ ການສຳຫຼວດວັດແທກ, ຖ່າຍພາບທາງອາກາດ ແລະ ສ້າງແຜນທີ່ ຢູ່ບໍລິເວນຊາຍແດນ;

5. ມີຄຳເຫັນຕໍ່ການສະເໜີ ຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ຈະເຄື່ອນໄຫວຢູ່ບໍລິເວນຊາຍແດນ;

6. ສະຫຼຸບ ແລະ ລາຍງານ ການປະຕິບັດວຽກງານບໍລິເວນຊາຍແດນ ໃຫ້ຄະນະກຳມາທິການຊາຍແດນແຫ່ງຊາດ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 22 ສິດ ແລະ ໜ້າທີ່ ຂອງກະຊວງອຸດສາຫະກຳ ແລະ ການຄ້າ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານບໍລິເວນຊາຍແດນ ກະຊວງອຸດສາຫະກຳ ແລະ ການຄ້າ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ປະສານສົມທົບກັບ ກະຊວງ, ອົງການ, ຄະນະກຳມະການປົກຄອງແຂວງ ທີ່ມີເຂດການປົກຄອງຕິດກັບຊາຍແດນແຫ່ງຊາດ ໃນການວາງນະໂຍບາຍ ແລະ ລະບຽບການ ກ່ຽວກັບ ການຄຸ້ມຄອງມະຫາພາກໃນຂົງເຂດວຽກງານອຸດສາຫະກຳ, ພະລັງງານ, ບໍ່ແຮ່ ແລະ ການຄ້າ ຢູ່ບໍລິເວນຊາຍແດນ;

2. ປະສານສົມທົບກັບປະເທດທີ່ມີຊາຍແດນຕິດຈອດ ໃນການຜັນຂະຫຍາຍຂອບສັນຍາການຮ່ວມມື ກ່ຽວກັບ ວຽກງານອຸດສາຫະກຳ, ພະລັງງານ, ບໍ່ແຮ່ ແລະ ການຄ້າ ຢູ່ບໍລິເວນຊາຍແດນ;

3. ຄຸ້ມຄອງ, ຕິດຕາມການເຄື່ອນໄຫວດຳເນີນ ໂຄງການພັດທະນາ ແລະ ກິດຈະການ ຢູ່ບໍລິເວນຊາຍແດນ;

4. ມີຄຳເຫັນຕໍ່ການສະເໜີຂອງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ຈະເຄື່ອນໄຫວຢູ່ບໍລິເວນຊາຍແດນ;

5. ສະຫຼຸບ ແລະ ລາຍງານ ການປະຕິບັດວຽກງານ ບໍລິເວນຊາຍແດນ ໃຫ້ຄະນະກຳມາທິການຊາຍແດນແຫ່ງຊາດ ຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 23 ສິດ ແລະ ໜ້າທີ່ ຂອງກະຊວງການເງິນ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານ ບໍລິເວນຊາຍແດນ ກະຊວງການເງິນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງກົນໄກ, ນະໂຍບາຍ ກ່ຽວກັບ ການລົງທຶນພັດທະນາ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ຢູ່ບໍລິເວນຊາຍແດນ;

2. ປະສານສົມທົບກັບກະຊວງ, ອົງການ, ຄະນະກຳມະການປົກຄອງແຂວງ ທີ່ມີເຂດການປົກຄອງ ຕິດກັບຊາຍແດນແຫ່ງຊາດ ໃນການສ້າງແຜນງົບປະມານ ແລະ ຄຸ້ມຄອງການນຳໃຊ້ງົບປະມານແຫ່ງລັດປະຈຳປີ ໃນການສ້າງ ກັນຕາຝັ່ງເຈື່ອນ, ຫຼັກໝາຍຊາຍແດນ ແລະ ໂຄງລ່າງພື້ນຖານ ຢູ່ບໍລິເວນຊາຍແດນ;

3. ຊຸກຍູ້, ຕິດຕາມ ກວດກາ ແລະ ປະສານສົມທົບກັບຂະແໜງການອື່ນ ແລະ ຄະນະກຳມະການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບ ການລົງທຶນ, ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດອື່ນ ຢູ່ບໍລິເວນຊາຍແດນ;

4. ສ້າງ ຕາໜ່າງຂ່າວ, ກົນໄກ ປະສານງານ, ແລກປ່ຽນຂໍ້ມູນ ແຫຼ່ງຂ່າວຮ່ວມກັບເຈົ້າໜ້າທີ່ປະຈຳດ່ານຊາຍແດນຂອງປະເທດໃກ້ຄຽງ ກ່ຽວກັບ ວຽກງານສືບສວນ-ສອບສວນ ແລະ ປາບປາມການຄ້າຂາຍເຖື່ອນທຸກຮູບແບບ ຕາມບໍລິເວນດ່ານຊາຍແດນ;

5. ມີຄຳເຫັນຕໍ່ການສະເໜີ ຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ຈະເຄື່ອນໄຫວຢູ່ບໍລິເວນຊາຍແດນ;

6. ປະສານສົມທົບກັບ ກະຊວງ, ອົງການ, ຄະນະກຳມະການປົກຄອງຂັ້ນແຂວງ ທີ່ມີເຂດການປົກຄອງຕິດກັບຊາຍແດນແຫ່ງຊາດ ໃນການຄຸ້ມຄອງ ກົນໄກ, ນະໂຍບາຍການເງິນ ແລະ ສ້າງເງື່ອນໄຂສະດວກ ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ລວມທັງ ການຕ້ານ, ສະກັດກັ້ນ ແລະ ປາບປາມການຄ້າຂາຍເຖື່ອນ ຢູ່ບໍລິເວນຊາຍແດນ;

7. ສະຫຼຸບ ແລະ ລາຍງານ ການປະຕິບັດວຽກງານບໍລິເວນຊາຍແດນ ໃຫ້ຄະນະກຳມາທິການຊາຍແດນແຫ່ງຊາດ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 24 ສິດ ແລະ ໜ້າທີ່ ຂອງຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ທີ່ມີເຂດການປົກຄອງຕິດກັບຊາຍແດນແຫ່ງຊາດ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານການເຄື່ອນໄຫວ ຢູ່ບໍລິເວນຊາຍແດນ ຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ ທີ່ມີເຂດການປົກຄອງຕິດກັບຊາຍແດນແຫ່ງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳພະແນກການທີ່ກ່ຽວຂ້ອງ ປະສານສົມທົບກັບ ກອງບັນຊາການທະຫານ, ທ້ອງທະຫານຊາຍແດນ, ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ໃນການຄົ້ນຄວ້າສ້າງລະບຽບການຄຸ້ມຄອງເຂດຫວງຫ້າມ;

2. ຊີ້ນຳ ພະແນກການ, ອົງການທີ່ຮັບຜິດຊອບ, ອົງການຈັດຕັ້ງມະຫາຊົນ ຂັ້ນແຂວງ ໃນການປະສານສົມທົບກັບ ກຳລັງທະຫານຊາຍແດນ ໃນການສ້າງບໍລິເວນຊາຍແດນ ໃຫ້ມີຄວາມເຂັ້ມແຂງໜັກແໜ້ນທາງດ້ານການເມືອງ, ເສດຖະກິດ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

3. ຊີ້ນຳ ພະແນກການ, ອົງການທີ່ຮັບຜິດຊອບ, ອົງການຈັດຕັ້ງມະຫາຊົນ ຂັ້ນແຂວງ ປະສານສົມທົບກັບກຳລັງທະຫານຊາຍແດນ ໃນການສຳຫຼວດ, ກວດກາ ບໍລິເວນຊາຍແດນ, ຂອບເຂດຊາຍແດນ, ເຂດຫວງຫ້າມ;

4. ຊີ້ນຳ ພະແນກການ, ອົງການທີ່ຮັບຜິດຊອບ, ອົງການຈັດຕັ້ງມະຫາຊົນ ແລະ ກຳລັງທີ່ກ່ຽວຂ້ອງ ໃນການປະສານສົມທົບກັບທະຫານຊາຍແດນ ແລະ ອົງການທີ່ກ່ຽວຂ້ອງ ໃນການ ສ້າງ ແລະ ຄຸ້ມຄອງ, ປ້ອງກັນຊາຍແດນແຫ່ງຊາດ, ປົກປັກຮັກສາຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຕ້ານ ແລະ ສະກັດກັ້ນອາຊະຍາກຳ ຢູ່ບໍລິເວນຊາຍແດນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ;

5. ຊີ້ນຳ ພະແນກການ, ອົງການທີ່ຮັບຜິດຊອບ, ອົງການຈັດຕັ້ງມະຫາຊົນ ຂັ້ນແຂວງ ໃນການປະຕິບັດໜ້າທີ່ຄຸ້ມຄອງຕາມຂະແໜງການ, ສ້າງເງື່ອນໄຂສະດວກ ກ່ຽວກັບ ລະບອບນະໂຍບາຍທາງດ້ານເສດຖະກິດ, ພາສີ-ອາກອນ, ທີ່ດິນໃຫ້ວິສາຫະກິດ, ບຸກຄົນ, ນັກລົງທຶນໃນໂຄງການກໍ່ສ້າງ, ໂຄງການພັດທະນາເສດຖະກິດ-ສັງຄົມ ຢູ່ບໍລິເວນຊາຍແດນ ຕາມກົດໝາຍ ແລະ ລະບຽບການ;

6. ຊີ້ນຳ ກອງບັນຊາການທະຫານຂັ້ນແຂວງ, ທ້ອງທະຫານຊາຍແດນຂັ້ນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອກຳນົດເປັນເຂດຫວງຫ້າມ;

7. ສະເໜີຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ໃນການກຳນົດ ເພີ່ມ ຫຼື ຫຼຸດ ບ້ານບໍລິເວນຊາຍແດນ ອອກຈາກລາຍຊື່ບ້ານບໍລິເວນຊາຍແດນ;

8. ມີຄຳເຫັນຕໍ່ການສະເໜີຂອງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວຢູ່ບໍລິເວນຊາຍແດນ;

9. ຈັດຕັ້ງໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ກົດໝາຍໃຫ້ ພະນັກງານ ແລະ ປະຊາຊົນ ກ່ຽວກັບການ ສ້າງ, ຄຸ້ມຄອງ, ປ້ອງກັນຊາຍແດນແຫ່ງຊາດ, ການປົກປັກຮັກສາຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນຊາຍແດນ;

10. ສ້າງແຜນການປະຈຳປີ ນຳໃຊ້ເຂົ້າໃນວຽກງານ ສ້າງ, ຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ, ຮັກສາ ຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນຊາຍແດນ;

11. ສະຫຼຸບ ແລະ ລາຍງານ ວຽກງານບໍລິເວນຊາຍແດນ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 25 ສິດ ແລະ ໜ້າທີ່ຂອງ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບ ແລະ ໃຫ້ການຮ່ວມມືກັບ ອົງການຄຸ້ມຄອງ ແລະ ກວດກາ ວຽກງານບໍລິເວນຊາຍແດນ ໃນການຄຸ້ມຄອງ ແລະ ກວດກາ ວຽກງານຄຸ້ມຄອງບໍລິເວນຊາຍແດນ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 26 ເນື້ອໃນການກວດກາ**

ການກວດກາ ວຽກງານບໍລິເວນຊາຍແດນ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດນະໂຍບາຍ, ແຜນຍຸດທະສາດ ແລະ ລະບຽບການ ທີ່ກ່ຽວຂ້ອງກັບວຽກງານບໍລິເວນຊາຍແດນ;
2. ການປະຕິບັດໜ້າທີ່ຂອງ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ກ່ຽວຂ້ອງ;
3. ການເຄື່ອນໄຫວ ຢູ່ບໍລິເວນຊາຍແດນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງ;
4. ເນື້ອໃນອື່ນ ທີ່ເຫັນວ່າ ມີຄວາມສຳຄັນ ແລະ ຈຳເປັນ.

**ມາດຕາ 27 ຮູບການກວດກາ**

ການກວດກາ ວຽກງານບໍລິເວນຊາຍແດນ ມີ ສາມ ຮູບການ ດັ່ງນີ້ :

1. ການກວດກາ ຢ່າງເປັນປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປ ຕາມແຜນການ ຢ່າງເປັນປະຈຳ ແລະ ມີການກຳນົດເວລາທີ່ແນ່ນອນ;
2. ການກວດກາ ໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າ ມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ກ່ອນລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ກ່ອນລ່ວງໜ້າ.

ໃນການດຳເນີນການກວດກາ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 28 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 29 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ລະເມີດດຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 30** ງົບປະມານ

ງົບປະມານຮັບໃຊ້ ວຽກງານຄຸ້ມຄອງບໍລິເວນຊາຍແດນ ໃຫ້ນໍາໃຊ້ງົບປະມານຂອງລັດ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 31 ການຈັດຕັ້ງປະຕິບັດ**

ກະຊວງການຕ່າງປະເທດ ເປັນເຈົ້າການ ໃນການຈັດຕັ້ງປະຕິບັດດໍາລັດສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດ ດໍາລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 32 ຜົນສັກສິດ**

ດໍາລັດສະບັບນີ້ ມີຜົນສັກສິດນັບແຕ່ວັນທີ 23 ມີນາ 2026 ເປັນຕົ້ນໄປ.

**ຕາງໜ້າລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

**ສອນໄຊ ສີພັນດອນ**